ກະຊວງອຸດສາຫະກຳ ແລະ ການຄ້າ
ໜ່ວຍງານການຈັດຕັ້ງປະຕິບັດໂຄງການ NIU
ຂາເຂົ້າ ເລກທີ 0375
ວັນທີ 20 AUG 2020

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ແຜນການ ແລະ ການລົງທຶນ
ກົມສົ່ງເສີມການລົງທຶນ

ເລກທີ..270..../ລທ2
ນະຄອນຫຼວງວຽງຈັນ, ວັນທີ..18.08.2020

ຮຽນ: - ທ່ານ ລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ ທີ່ເຄົາລົບ ແລະ ນັບຖື.
(ປະທານຄະນະຊີ້ນຳແຜນງານໂຄງການຊ່ວຍເຫຼືອລ້າຫຼາຍຝ່າຍເພື່ອພັດທະນາການຄ້າ PEC);
- ທ່ານ ຮອງລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ (ຜູ້ຊີ້ນຳ);
(ໂດຍຜ່ານ ທ່ານ ຫົວໜ້າ ກົມແຜນການ ແລະ ການຮ່ວມມື, ກະຊວງ ອຄ)

ເລື່ອງ: ພິຈາລະນາອະນຸມັດ ການຂໍຕໍ່ໄລຍະເວລາ ການນຳໃຊ້ທຶນສະໜັບສະໜູນໂຄງການຍ່ອຍ (Challenge Facility - CF) ຂອງຕົວຊີ້ວັດທີ 10: ການແກ້ໄຂການລົ້ມລະລາຍ ຂອງໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (LCT) ເພື່ອຈັດຕັ້ງປະຕິບັດໂຄງການທີ່ສະເໜີໂດຍກົມກວດກາ ແລະ ປະເມີນຜົນນິຕິກຳ, ກະຊວງ ຍຸຕິທຳ.

- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ ສະບັບເລກທີ 0358/ອຄ.ກພຣ, ລົງວັນທີ 26 ມີນາ 2018;
- ອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອພັດທະນາໃນຂະແໜງອຸດສາຫະກຳ-ການຄ້າ ແລະ ພາກເອກະຊົນ (ODA) ສະບັບເລກທີ 1998/ອຄ.ກພຣ, ລົງວັນທີ 31 ຕຸລາ 2016;
- ອີງຕາມສັນຍາໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ ສະບັບເລກທີ 6318 – LA, ລົງວັນທີ 31 ຕຸລາ 2018;
- ອີງຕາມໜັງສືສະເໜີຂໍຕໍ່ໄລຍະເວລາໂຄງການເພື່ອສືບຕໍ່ນຳໃຊ້ທຶນທີ່ຍັງເຫລືອສຳລັບການປັບປຸງຕົວຊີ້ວັດ 10 ສະບັບເລກທີ180/ກຍ ລົງວັນທີ 07 ສິງຫາ 2020;
- ອີງຕາມການຄົ້ນຄວ້າເຫັນດີຂອງກົມກວດກາ ແລະ ປະເມີນຜົນນິຕິກຳ, ກະຊວງ ຍຸຕິທຳ ຮ່ວມກັບຜູ້ໃຫ້ທຶນ;

ກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ ໃນນາມຜູ້ຈັດຕັ້ງປະຕິບັດ ເສົາຄ້ຳທີ A (Pillar A - Component A3) ຂອງໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ, ຂໍຖືເປັນກຽດຮຽນມາ

ຍັງທ່ານຊາບວ່າ: ກົມກວດກາ ແລະ ປະເມີນຜົນນິຕິກຳ, ກະຊວງ ຍຸຕິທຳ ໄດ້ເລີ່ມຈັດຕັ້ງປະຕິບັດກິດຈະກຳ ທີ່ຕິດພັນກັບການປັບປຸງຕົວຊີ້ວັດທີ 10: ການແກ້ໄຂການລົ້ມລະລາຍ ໂດຍການຜັນຂະຫຍາຍ ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ສະບັບເລກທີ 75/ສພຊ, ລົງວັນທີ 26 ທັນວາ 2019 ທີ່ປະກາດໃຊ້ໃນວັນທີ 16 ມິຖຸນາ 2020 ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບການຄຸ້ມຄອງການລົ້ມລະລາຍວິສາຫະກິດ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ສອດຄ່ອງກັບກົດໝາຍສະບັບດັ່ງກ່າວ ແລະ ການສ້າງຄວາມເຂັ້ມແຂງແກ່ລະບົບການຄຸ້ມຄອງ ຕິດພັນກັບການປັບປຸງຕົວຊີ້ວັດ 10 ການແກ້ໄຂການລົ້ມລະລາຍ, ກົມສົ່ງເສີມການລົງທຶນ ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາອະນຸມັດ ການຂໍຕໍ່ໄລຍະເວລາ, ແຜນວຽກທີ່ປັບປຸງໃໝ່ ຮ່ວມກັບກົມກົດໝາຍ ແລະ ສານປະຊາຊົນສູງສຸດ ລວມທັງແຜນງົບປະມານໂຄງການຍ່ອຍ (CF) ສະໜັບສະໜູນການຈັດຕັ້ງປະຕິບັດ ໃຫ້ໄດ້ຕາມເປົ້າໝາຍ ຂອງກົມກວດກາ ແລະ ປະເມີນຜົນນິຕິກຳ, ກະຊວງ ຍຸຕິທຳ. ເນື້ອໃນຂອງໜັງສືສະເໜີຂໍອະນຸມັດການນຳໃຊ້ທຶນໂຄງການຍ່ອຍ CF, ສະບັບເລກທີ 180/ກຍ ລົງວັນທີ 07 ສິງຫາ 2020, ມີລາຍລະອຽດມີດັ່ງນີ້:

1. **ຊື່ໂຄງການ**: ການສ້າງຄວາມເຂັ້ມແຂງໃຫ້ລະບົບການຄຸ້ມຄອງການລົ້ມລະລາຍວິສາຫະກິດ (Strengthening the Insolvency Regime).
2. **ເປົ້າໝາຍຂອງໂຄງການ**: ຜັນຂະຫຍາຍການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ສະບັບເລກທີ 75/ສພຊ, ລົງວັນທີ 26 ທັນວາ 2019 ທີ່ປະກາດໃຊ້ໃນວັນທີ 16 ມິຖຸນາ 2020 ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບການຄຸ້ມຄອງການລົ້ມລະລາຍວິສາຫະກິດ.
3. **ກິດຈະກຳຫຼັກຂອງໂຄງການ**:
   - 3.1 ສ້າງຕັ້ງຄະນະຊີ້ນຳທີ່ປະກອບດ້ວຍທ່ານ ຮອງລັດຖະມົນຕີກະຊວງ ຍຸຕິທຳ ແລະ ຮອງປະທານສານປະຊາຊົນສູງສຸດ ເປັນ ປະທານຄະນະ ເພື່ອເຮັດໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຄງການດຳເນີນໄປໄດ້ເປັນຢ່າງດີ ແລະ ມີປະສິດທິຜົນ;
   - 3.2 ສ້າງຕັ້ງຄະນະຮັບຜິດຊອບໂຄສະນາເຜີຍແຜ່ກົດໝາຍຟື້ນຟູ ແລະ ລົ້ມລະລາຍວິສາຫະກິດ ທີ່ປະກອບດ້ວຍຄະນະຮັບຜິດຊອບປັບປຸງຮ່າງກົດໝາຍດັ່ງກ່າວ ທີ່ມາຈາກຫຼາຍພາກສ່ວນລວມທັງກະຊວງ ຍຸຕິທຳ, ສານປະຊາຊົນສູງສຸດ, ກະຊວງ ອຸດສາຫະກຳ ແລະ ການຄ້າ;
   - 3.3 ສ້າງຕັ້ງຄະນະຮັບຜິດຊອບຝຶກອົບຮົມນັກຄຸ້ມຄອງຊັບສິນ ແລະ ຫຼັກສູດ;
   - 3.4 ສ້າງຕັ້ງຄະນະຮັບຜິດຊອບປະສານງານ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດກິດຈະກຳຕ່າງໆທັງເກົ່າ ແລະ ທີ່ສະເໜີໃໝ່ (ມອບໃຫ້ກົມກວດກາ ແລະ ປະເມີນຜົນນິຕິກຳ ເປັນຜູ້ຊຸກຍູ້ ແລະ ຮັບຜິດຊອບເລື່ອງການກະກຽມເອກະສານຕ່າງໆ ທີ່ຈຳເປັນໃຫ້ແກ່ການສະເໜີຂໍງົບປະມານ; ສ່ວນກົມວິຊາການທີ່ກ່ຽວຂ້ອງຂອງສານປະຊາຊົນສູງສຸດ (ຄະນະສານການຄ້າ) ຫຼື ກະຊວງ ຍຸຕິທຳ (ກົມກົດໝາຍ) ເປັນຜູ້ຈັດຕັ້ງປະຕິບັດກິດຈະກຳຕົວຈິງ);
   - 3.5 ປັບປຸງຂັ້ນຂອດການຮ່ວມມືປະສານງານ ລະຫວ່າງ ກະຊວງ ຍຸຕິທຳ, ສານປະຊາຊົນສູງສຸດ, ກະຊວງ ແຜນການ ແລະ ການລົງທຶນ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ຜູ້ໃຫ້ທຶນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໂຄງການມີປະສິດທິຜົນຂຶ້ນກວ່າເກົ່າ.

4. ພາກສ່ວນຈັດຕັ້ງປະຕິບັດ: ກະຊວງຍຸຕິທຳ ແລະ ອົງການຕຸລາການ ໂດຍມອບໃຫ້ກົມກວດກາ ແລະ ປະເມີນຜົນນິຕິກຳ ເປັນຜູ້ປະສານງານ ແລະ ຄະນະສານການຄ້າ, ສານປະຊາຊົນສູງສຸດ ແລະ ກົມກົດໝາຍ, ກະຊວງ ຍຸຕິທຳ.
5. ໄລຍະເວລາ: 16 ສິງຫາ 2020 ເຖິງ 30 ມິຖຸນາ 2021.
6. ງົບປະມານ: 150.000 ໂດລາສະຫະລັດ, ໄດ້ນຳໃຊ້ແລ້ວຈຳນວນ 5.897 ໂດລາສະຫະລັດ, ຈຳນວນງົບປະມານຍັງເຫລືອຕົວຈິງ 144.103 ໂດລາສະຫະລັດ

ສຳລັບບົດສະເໜີຂໍຕໍ່ໄລຍະເວລາ ແລະ ແຜນວຽກ ຂອງໂຄງການດັ່ງກ່າວຂ້າງເທິງນັ້ນ, ກົມກວດກາ ແລະ ປະເມີນຜົນນິຕິກຳ, ກະຊວງ ຍຸຕິທຳ ໄດ້ມີການດັດແກ້ ແລະ ປັບປຸງເນື້ອໃນຕາມຄຳເຫັນ ຂອງຜູ້ໃຫ້ທຶນທີ່ໄດ້ຄົ້ນຄ້ວາພິຈາລະນາຮ່ວມກັບກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ (NIU), ກົມແຜນການ ແລະ ການຮ່ວມມື, ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນທີ່ຮຽບຮ້ອຍແລ້ວ. ກົມສົ່ງເສີມການລົງທຶນ ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາອະນຸມັດການຂໍຕໍ່ໄລຍະເວລາການນຳໃຊ້ທຶນສະໜັບສະໜູນໂຄງການຍ່ອຍ (CF) ຂອງກົມກວດກາ ແລະ ປະເມີນຜົນນິຕິກຳ ທີ່ໄດ້ສະເໜີມານີ້ ເພື່ອເປັນການຊຸກຍູ້ການຈັດຕັ້ງປະຕິບັດວຽກງານປັບປຸງຄວາມສະດວກໃນການດຳເນີນທຸລະກິດຢູ່ ສປປ ລາວ ຕາມຄຳສັ່ງເລກທີ 02/ນຍ ໃຫ້ໄດ້ຮັບຜົນດີ (ລາຍລະອຽດຄັດຕິດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ພິຈາລະນາ ອະນຸມັດຕາມທາງຄວນດ້ວຍ.

ຫົວໜ້າກົມ

ອຸຕະແກ້ວ ແກ້ວດວງສີນ

ອະນຸມັດ:
ທ່ານ ລັດຖະມົນຕີ ກະຊວງ ອຄ

ຢັ້ງຢືນ:
ທ່ານ ຮອງລັດຖະມົນຕີ (ຜູ້ຊີ້ນຳກົມຜຮ), ກະຊວງ ອຄ

ຄຳເຫັນ
ທ່ານ ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງ ອຄ